# ສັນຍາອາຊຽນວ່າດ້ວຍການຄ້າທາງເອເລັກໂຕຣນິກ

ລັດຖະບານ ແຫ່ງບຣູໄນດາຣູຊາລາມ, ຣາດຊະອານາຈັກ ກຳປູເຈຍ, ສາທາລະນະລັດ ອິນໂດເນເຊຍ, ສາທາລະນະລັດ ປະຊາທິປະໄຕ ປະຊາຊົນ ລາວ, ມາເລເຊຍ, ສະຫະພັນ ສາທາລະນະລັດ ມຽນມາ, ສາທາລະນະລັດ ຟີລິບປິນ, ສາທາລະນະລັດ ສິງກະໂປ, ຣາດຊະອານາຈັກ ໄທ, ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ, ບັນດາສະມາຊິກ ສະມາຄົມບັນດາປະເທດສະມາຊິກອາຊຽນ (ASEAN) (ຕໍ່ໄປນີ້ເອີ້ນວ່າ "ບັນດາປະເທດສະມາຊິກ" ຫຼື "ປະເທດ ສະມາຊິກ");

**ໂດຍຮັບຮູ້ເຖິງ** ບົດບາດຂອງການຄ້າທາງເອເລັກໂຕຣນິກ ໃນການສົ່ງເສີມການຂະຫຍາຍຕົວຂອງເສດຖະກິດ ແລະ ການພັດທະນາສັງຄົມໃນພາກພື້ນອາຊຽນ;

**ໂດຍຮູ້ຄຸນຄ່າ** ການປະກອບສ່ວນຂອງການຄ້າທາງເອເລັກໂຕຣນິກ ໃນການເພີ່ມທະວີການເຊື່ອມຕໍ່ ແລະ ການຮ່ວມມືໃນຂະແໜງການໃນພາກພື້ນອາຊຽນ ການໃນພາກພື້ນອາຊຽນ ຕາມແຜນຍຸດທະສາດສ້າງຕັ້ງປະຊາຄົມເສດຖະກິດອາຊຽນ ປີ 2025 (AEC Blueprint 2025) ທີ່ໄດ້ຖືກຮັບຮອງເອົາໃນວັນທີ 22 ເດືອນພະຈິກ 2015;

**ສ້າງຕັ້ງຂຶ້ນ**ບົນພື້ນຖານຈາກມາດຕາທີ 5 (ການອຳນວຍຄວາມສະດວກຂອງການຂະຫຍາຍຕົວຂອງການຄ້າທາງເອເລັກໂຕຣນິກ) ຂອງຂອບສັນຍາ ສັນຍາວ່າດ້ວຍເອເລັກໂຕຣນິກ ອາຊຽນ (E-ASEAN) ທີ່ລົງນາມໂດຍຜູ້ນຳອາຊຽນໃນວັນທີ 24 ເດືອນພະຈິກປີ 2000 ທີ່ປະເທດສິງກະໂປ;

**ໂດຍຮັບຮູ້ເຖິງ** ການປະກອບສ່ວນທີ່ສຳຄັນຂອງການຄ້າທາງເອເລັກໂຕຣນິກໃນການອຳນວຍຄວາມສະດວກ ແກ່ການຄ້າ ແລະ ການລົງທຶນຂ້າມແດນ ແລະ ຫຼຸດຜ່ອນຄ່າໃຊ້ຈ່າຍທີ່ເປັນສິ່ງກີດຂວາງ ການເຂົ້າເຖິງ ແລະ ການດຳເນີນງານຂອງທຸລະກິດ, ໂດຍສະເພາະແມ່ນຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ (MSMEs);

**ໂດຍສະໜັບສະໜູນ** ຄວາມສຳຄັນຂອງການປະສານງານ ແລະ ການຮ່ວມມືລະຫວ່າງປະເທດສະມາຊິກເພື່ອກ້າວໄປສູ່ການພັດທະນາ ແລະ ການນຳໃຊ້ການຄ້າທາງເອເລັກໂຕຣນິກໃນພາກພື້ນອາຊຽນ; ແລະ

**ໂດຍຮັບຮູ້ເຖິງ** ຄວາມຕ້ອງການທີ່ຈະສ້າງຄວາມສະດວກໃນການດຳເນີນທຸລະກຳການຄ້າທາງເອເລັກໂຕຣນິກຂ້າມແດນໃນພາກພື້ນອາຊຽນ ເພື່ອເພີ່ມປະສິດທິຜົນຂອງການເຊື່ອມໂຍງເສດຖະກິດພາກພື້ນ.

**ໄດ້ຕົກລົງດັ່ງລຸ່ມນີ້:**

**ມາດຕາ 1**

**ນິຍາມ**

ສຳລັບຈຸດປະສົງຂອງສັນຍາສະບັບນີ້:

(ກ) **ATISA** ໝາຍເຖິງສັນຍາວ່າດ້ວຍການຄ້າບໍລິການອາຊຽນ;

(ຂ) **Computing Facilities** ໝາຍເຖິງເຄື່ອງ ເຊີເວີຄອມພິວເຕີ ແລະ ອຸປະກອນເກັບຮັກສາຂໍ້ມູນສຳລັບການປຸງແຕ່ງ ຫຼື ການເກັບຮັກສາຂໍ້ມູນ ທີ່ນຳໃຊ້ສຳລັບການຄ້າ;

(ຄ) **ການຢັ້ງຢືນທາງເອເລັກໂຕຣນິກ (Electronic Authentication)** ໝາຍເຖິງຂະບວນການໃນການຢັ້ງຢືນຄຳຖະແຫຼງ ຫຼື ຄຳຮ້ອງຂໍເອເລັກໂຕຣນິກ ເພື່ອສ້າງຄວາມເຊື່ອໝັ້ນຕໍ່ກັບຄວາມໜ້າເຊື່ອຖືຂອງຄຳຖະແຫຼງ ຫຼື ຄຳຮ້ອງຂໍນັ້ນ;

(ງ) **ລາຍເຊັນເອເລັກໂຕຣນິກ** ແຕ່ລະສະມາຊິກມີຄວາມໝາຍສະເພາະຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການຂອງຕົນ;

(ຈ) **GATS** ໝາຍເຖິງສັນຍາທົ່ວໄປວ່າດ້ວຍການຄ້າບໍລິການ;

(ສ) **ນິຕິບຸກຄົນ** ໝາຍເຖິງນິຕິບຸກຄົນໃດໜຶ່ງທີ່ຖືກສ້າງຕັ້ງຂຶ້ນ ຫຼື ຖືກຈັດຕັ້ງຂຶ້ນພາຍໃຕ້ກົດໝາຍຂອງປະເທດສະມາຊິກ , ບໍ່ວ່າຈະເປັນອົງກອນສະແຫວງຫາຜົນກຳໄລ ຫຼື ບໍ່ ແລະ ບໍ່ວ່າຈະເປັນຂອງພາກເອກະຊົນ ຫຼື ພາກລັດ ເຊັ່ນ: ບໍລິສັດຈຳກັດ, ກອງທຶນຮ່ວມ (Trust), ວິສາຫະກິດຫຸ້ນສ່ວນ, ການຮ່ວມທຶນ, ການເປັນເຈົ້າຂອງພຽງຜູ້ດຽວ ຫຼື ສະມາຄົມ;

(ຊ) **ນິຕິບຸກຄົນຂອງປະເທດສະມາຊິກອື່ນ** ໝາຍເຖິງນິຕິບຸກຄົນເຊິ່ງແມ່ນ:

(i) ຖືກສ້າງຕັ້ງຂຶ້ນ ຫຼື ຖືກຈັດຕັ້ງຂຶ້ນຕາມກົດໝາຍຂອງສະມາຊິກອື່ນ, ແລະໄດ້ເຂົ້າຮ່ວມດຳເນີນທຸລະກິດຢ່າງແທ້ຈິງໃນດິນແດນຂອງປະເທດສະມາຊິກນັ້ນ ຫຼື ສະມາຊິກອື່ນ; ຫຼື

(ii) ໃນກໍລະນີຂອງການໃຫ້ບໍລິການໂດຍມີການສ້າງຕັ້ງວິສາຫະກິດ, ເປັນເຈົ້າຂອງ ຫຼື ຄວບຄຸມໂດຍ:

1) ບຸກຄົນທົ່ວໄປຂອງປະເທດສະມາຊິກນັ້ນ; ຫຼື

2) ນິຕິບຸກຄົນຂອງປະເທດສະມາຊິກອື່ນນັ້ນ ດັ່ງທີ່ໄດ້ລະບຸໄວ້ໃນວັກຍ່ອຍ (i);

(ຍ) ນິຕິບຸກຄົນແມ່ນ:

(i) **ຖືວ່າເປັນເຈົ້າຂອງ** ໂດຍບຸກຄົນຂອງປະເທດສະມາຊິກໃດໜຶ່ງ ຖ້າຫາກວ່າ ຫຼາຍກວ່າ 50 ສ່ວນຮ້ອຍ ຂອງ ຜົນປະໂຫຍດຕາມຊັບສິນ ໂດຍມີເຈົ້າຂອງທີ່ໄດ້ຮັບຜົນປະໂຫຍດ ເປັນບຸກຄົນຢູ່ໃນປະເທດສະມາຊິກນັ້ນ;

(ii) **ຖືກຄວບຄຸມ**ໂດຍບຸກຄົນທີ່ຢູ່ໃນປະເທດສະມາຊິກ ຖ້າບຸກຄົນນັ້ນມີອຳນາດໃນການແຕ່ງຕັ້ງຄະນະອຳນວຍການສ່ວນໃຫຍ່ຂອງຕົນ ຫຼື ມີອຳນາດທາງກົດໝາຍໃນການຊີ້ນຳການປະຕິບັດວຽກງານ;

(iii) **ເປັນບໍລິສັດໃນເຄືອ** ກັບນິຕິບຸກຄົນອື່ນເມື່ອນິຕິບຸກຄົນຄວບຄຸມນິຕິບຸກຄົນອື່ນ ຫຼື ຖືກຄວບຄຸມໂດຍຄົນອື່ນ; ຫຼື ເມື່ອນິຕິບຸກຄົນ ແລະ ນິຕິບຸກຄົນອື່ນຖືກຄວບຄຸມໂດຍຄົນບຸກຄົນຄົນດຽວກັນ;

(ດ) **ບຸກຄົນທົ່ວໄປຂອງປະເທດສະມາຊິກອື່ນ**ແມ່ນຄົນທົ່ວໄປທີ່ຢູ່ພາຍໃຕ້ກົດໝາຍຂອງປະເທດສະມາຊິກ;

(i) ມີສັນຊາດ ຫຼື ເປັນພົນລະເມືອງຂອງສະມາຊິກນັ້ນ; ຫຼື

(ii) ມີສິດໃນການມີພູມລຳເນົາຖາວອນຢູ່ໃນປະເທດສະມາຊິກນັ້ນ, ທີ່ທັງປະເທດສະມາຊິກນັ້ນ ແລະ ປະເທດສະມາຊິກທີ່ບຸກຄົນສະໜອງການບໍລິການຢູ່ ຮັບຮູ້ເຖິງການມີພູມລຳເນົາຖາວອນ ແລະ ປະຕິບັດຕໍ່ຜູ້ກ່ຽວແບບດຽວທີ່ປະຕິບັດຕໍ່ກັບພົນລະເມືອງຂອງຕົນ ໃນເລື່ອງທີ່ຕິດພັນກັບມາດຕະການທີ່ມີຜົນຕໍ່ການຄ້າດ້ານບໍລິການ;

(ຕ) **ຂໍ້ມູນສ່ວນບຸກຄົນ** ໝາຍເຖິງ ບັນດາຂໍ້ມູນຂ່າວສານ ລວມທັງຂໍ້ມູນ, ທີ່ບຸກຄົນລະບຸ ຫຼື ສາມາດລະບຸຕົວບຸກຄົນ; ແລະ

(ນ) **ເອກະສານຄຸ້ມຄອງການຄ້າ** ໝາຍເຖິງແບບຟອມທີ່ອອກ ຫຼື ຄວບຄຸມໂດຍປະເທດສະມາຊິກ ຊຶ່ງຕ້ອງໄດ້ດຳເນີນການໂດຍ ຫຼື ໃຫ້ ຜູ້ນຳເຂົ້າ ຫຼື ຜູ້ສົ່ງອອກ ສຳລັບການນຳເຂົ້າ ຫຼື ສົ່ງອອກສິນຄ້າ.

## ມາດຕາ 2
## ຈຸດປະສົງ

ຈຸດປະສົງຂອງສັນຍາສະບັບນີ້ແມ່ນເພື່ອ:

(ກ) ອຳນວຍຄວາມສະດວກແກ່ການເຮັດທຸລະກຳການຄ້າທາງເອເລັກໂຕຣນິກຂ້າມແດນໃນພາກພື້ນອາຊຽນ;

(ຂ) ປະກອບສ່ວນສ້າງສະພາບແວດລ້ອມທີ່ມີຄວາມໄວ້ວາງໃຈ ແລະ ຄວາມໝັ້ນໃຈໃນການນຳໃຊ້ການຄ້າທາງເອເລັກໂຕຣນິກໃນພາກພື້ນອາຊຽນ; ແລະ

(ຄ) ເພີ່ມທະວີການຮ່ວມມືລະຫວ່າງສະມາຊິກ ໃນການພັດທະນາ ແລະ ເພີ່ມອັດຕາການນຳໃຊ້ການຄ້າທາງເອເລັກໂຕຣນິກ ເພື່ອສົ່ງເສີມການເຕີບໂຕແບບມີສ່ວນຮ່ວມ ແລະ ຫຼຸດຊ່ອງວ່າງຂອງການພັດທະນາໃນພາກພື້ນອາຊຽນ.

## ມາດຕາ 3
## ຂອບເຂດ

1. ຂໍ້ຕົກລົງສະບັບນີ້ຕ້ອງນຳໃຊ້ກັບມາດຕະການທີ່ໄດ້ຖືກຮັບຮອງ ຫຼື ຖືກຮັກສາໄວ້ໂດຍປະເທດສະມາຊິກ ທີ່ສົ່ງຜົນກະທົບຕໍ່ການຄ້າທາງເອເລັກໂຕຣນິກ.
2. ສັນຍາສະບັບນີ້ຈະບໍ່ນຳໃຊ້ກັບການຈັດຊື້ຂອງລັດຖະບານ.

## ມາດຕາ 4
## ການພົວພັນກັບຂໍ້ຕົກລົງອື່ນໆ

1. ບໍ່ມີຂໍ້ໃດໃນສັນຍາສະບັບນີ້ຈະຂັດກັບສິດ ແລະ ພັນທະທີ່ມີຢູ່ຂອງປະເທດສະມາຊິກໃດໜຶ່ງພາຍໃຕ້ຂໍ້ຕົກລົງອື່ນຂອງອາຊຽນທີ່ກ່ຽວຂ້ອງ[1] ທີ່ສະມາຊິກເປັນພາຄີ.
2. ໃນກໍລະນີທີ່ມີຄວາມບໍ່ສອດຄ່ອງກັນລະຫວ່າງສັນຍາສະບັບນີ້ ແລະ ຂໍ້ຕົກລົງໃດໜຶ່ງຂອງອາຊຽນທີ່ກ່ຽວຂ້ອງ, ຂໍ້ຕົກລົງອື່ນຂອງອາຊຽນຈະມີຜົນເໜືອຄວາມບໍ່ສອດຄ່ອງນັ້ນ.

## ມາດຕາ 5
## ຫຼັກການ

1. ໃນການພັດທະນາ ແລະ ສົ່ງເສີມການຄ້າທາງເອເລັກໂຕຣນິກ, ພາລະບົດບາດຂອງແຕ່ລະປະເທດສະມາຊິກແມ່ນຕ້ອງໄດ້ສ້າງສະພາບແວດລ້ອມທາງກົດໝາຍ ແລະ ລະບຽບການທີ່ເໝາະສົມ, ສະໜອງສິ່ງແວດລ້ອມທຸລະກິດທີ່ມີປະສິດທິພາບ ແລະ ການແຂ່ງຂັນ ແລະ ປົກປ້ອງຜົນປະໂຫຍດຂອງສ່ວນລວມ.

2. ຂອບເຂດຂອງກົດໝາຍ ແລະ ກົດລະບຽບໃນແຕ່ລະປະເທດສະມາຊິກ ເພື່ອເປັນການສະໜັບສະໜູນການຄ້າທາງເອເລັກໂຕຣນິກ, ຕ້ອງຖືເອົາກົດໝາຍ, ສົນທິສັນຍາ, ຫຼັກການ ຫຼື ຄຳແນະນຳຕ່າງໆທີ່ໄດ້ຮັບຮອງເອົາໃນລະດັບສາກົນ ເປັນແມ່ແບບ.

3. ແຕ່ລະປະເທດສະມາຊິກຄວນຊຸກຍູ້ການນຳໃຊ້ການແກ້ໄຂຂໍ້ຂັດແຍ້ງໃນທາງເລືອກ (Alternative Dispute Resolution - ADR) ເພື່ອສະໜັບສະໜູນການແກ້ໄຂຂໍ້ຮຽກຮ້ອງໃນການເຮັດທຸລະກຳການຄ້າທາງເອເລັກໂຕຣນິກ.

4. ບັນດາປະເທດສະມາຊິກຄວນພະຍາຍາມຮັບຮູ້ເຖິງຄວາມສຳຄັນຂອງຫຼັກການຄວາມເປັນກາງທາງເຕັກໂນໂລຊີ ແລະ ຮັບຮູ້ເຖິງຄວາມຈຳເປັນໃນການດັດປັບນະໂຍບາຍ ແລະ ກົດລະບຽບ ລະຫວ່າງບັນດາປະເທດສະມາຊິກເພື່ອອຳນວຍຄວາມສະດວກໃຫ້ແກ່ການຄ້າທາງເອເລັກໂຕຣນິກຂ້າມແດນ.

## ມາດຕາ 6
## ການຮ່ວມມື

1. ແຕ່ລະປະເທດສະມາຊິກຕ້ອງຮ່ວມມືໃນຂົງເຂດຕ່າງໆເຊັ່ນ:
   (ກ) ພື້ນຖານໂຄງລ່າງເຕັກໂນໂລຊີຂໍ້ມູນຂ່າວສານ ແລະ ການສື່ສານ (ICT);
   (ຂ) ຄວາມສາມາດດ້ານການສຶກສາ ແລະ ເຕັກໂນໂລຊີ;
   (ຄ) ການປົກປ້ອງຜູ້ຊົມໃຊ້ອອນລາຍ;
   (ງ) ຂອບດ້ານກົດໝາຍ ແລະ ກົດລະບຽບການຄ້າທາງເອເລັກໂຕຣນິກ;

---
[1] ATISA ຈະຖືວ່າເປັນສັນຍາອາຊຽນທີ່ກ່ຽວຂ້ອງພາຍໃຕ້ວັກນີ້ໂດຍບໍ່ຄຳນຶງເຖິງວັນທີມີຜົນບັງຄັບໃຊ້ຂອງ ATISA.

(ຈ) ຄວາມປອດໄພໃນການເຮັດທຸລະກໍາອອນລາຍ, ລວມມີການປົກປ້ອງຂໍ້ມູນສ່ວນຕົວອອນລາຍ;

(ສ) ການຊໍາລະ ທາງເອເລັກໂຕຣນິກ ແລະ ການຫັກບັນຊີ;

(ຍ) ການອໍານວຍຄວາມສະດວກທາງດ້ານການຄ້າ;

(ດ) ສິດທາງຊັບສິນທາງປັນຍາ;

(ຕ) ການແຂ່ງຂັນ;

(ທ) ຄວາມປອດໄພທາງອິນເຕີເນັດ (Cybersecurity); ແລະ

(ນ) ການຂົນສົ່ງເພື່ອສ້າງຄວາມສະດວກແກ່ການຄ້າທາງເອເລັກໂຕຣນິກ.

2. ແຕ່ລະປະເທດສະມາຊິກຕ້ອງປະຕິບັດການລິເລີ່ມທາງດ້ານການຮ່ວມມືຕາມຄວາມເໝາະສົມດັ່ງຕໍ່ໄປນີ້:

(ກ) ການແລກປ່ຽນຂໍ້ມູນ, ປະສົບການ ແລະ ລະບຸການປະຕິບັດທີ່ດີທີ່ສຸດ;

(ຂ) ການປະຕິບັດແຜນງານ ຫຼື ໂຄງການເພື່ອໃຫ້ການຊ່ວຍເຫຼືອແກ່ສະມາຊິກເພື່ອປັບປຸງລະບຽບການພາຍໃນຂອງຕົນ ເພື່ອເປັນການສົ່ງເສີມການຄ້າທາງເອເລັກໂຕຣນິກ ແລະ ການສົ່ງເສີມການນໍາໃຊ້ການຄ້າທາງເອເລັກໂຕຣນິກຢ່າງກ້ວາງຂວາງ; ແລະ

(ຄ) ສ້າງກົນໄກການຮ່ວມມືລະຫວ່າງອໍານາດການປົກຄອງ ເພື່ອອໍານວຍຄວາມສະດວກແກ່ການສືບສວນຢ່າງວ່ອງໄວ ແລະ ແກ້ໄຂບັນຫາການສໍ້ໂກງ ທີ່ກ່ຽວຂ້ອງກັບການເຮັດທຸລະກໍາການຄ້າທາງເອເລັກໂຕຣນິກ ແລະ ເລື່ອງອື່ນໆທີ່ໄດ້ຮັບການເຫັນດີຈາກສະມາຊິກ.

## ມາດຕາ 7
## ການອໍານວຍຄວາມສະດວກແກ່ການຄ້າທາງເອເລັກໂຕຣນິກຂ້າມແດນ

1. ການຄ້າແບບບໍ່ນໍາໃຊ້ເຈ້ຍ

ແຕ່ລະປະເທດສະມາຊິກຕ້ອງໄດ້ຂະຫຍາຍການນໍາໃຊ້ເອກະສານທາງເອເລັກໂຕຣນິກເຂົ້າໃນການຄຸ້ມຄອງການຄ້າ ແລະ ສ້າງຄວາມສະດວກໃນການແລກປ່ຽນເອກະສານທາງເອເລັກໂຕຣນິກຜ່ານການນໍາໃຊ້ລະບົບ ICT ທີ່ສອດຄ່ອງກັບຂໍ້ກໍານົດຂອງສັນຍາວ່າດ້ວຍພາສີອາກອນ ທີ່ໄດ້ຖືກລົງນາມ ໃນວັນທີ 30 ເມສາ 2012 ຢູ່ທີ່ນະຄອນຫຼວງພະນົມເປັນ, ແລະ ສັນຍາສາກົນອື່ນ ກ່ຽວກັບການຄ້າແບບບໍ່ນໍາໃຊ້ເຈ້ຍ ທີ່ປະເທດສະມາຊິກໄດ້ເປັນພາຄີ.

2. ການຢັ້ງຢືນທາງເອເລັກໂຕຣນິກ ແລະ ລາຍເຊັນເອເລັກໂຕຣນິກ

(ກ) ຍົກເວັ້ນໃນກໍລະນີທີ່ໄດ້ມີການກໍານົດໄວ້ໃນລະບຽບກົດໝາຍ ແລະ ລະບຽບການອື່ນ, ປະເທດສະມາຊິກຕ້ອງບໍ່ປະຕິເສດການມີຜົນ ທາງກົດໝາຍຂອງລາຍເຊັນພຽງແຕ່ບົນພື້ນຖານວ່າລາຍເຊັນແມ່ນຢູ່ໃນຮູບແບບເອເລັກໂຕຣນິກ.

ໝາຍເຫດ: ປະເທດກໍາປູເຈຍ, ສປປ ລາວ ແລະ ມຽນມາບໍ່ຈໍາເປັນຕ້ອງໄດ້ປະຕິບັດ ວັກຍ່ອຍ (ກ) ໃນໄລຍະເວລາຫ້າປີຫຼັງຈາກວັນທີ ສັນຍາສະບັບນີ້ເລີ່ມມີຜົນບັງຄັບໃຊ້.

(ຂ) ແຕ່ລະປະເທດສະມາຊິກຕ້ອງຮັກສາ ຫຼື ສ້າງມາດຕະການໂດຍອີງຕາມມາດຕະຖານສາກົນສໍາລັບການຢັ້ງຢືນທາງເອເລັກໂຕຣນິກ ວ່າ:

(i) ອະນຸຍາດໃຫ້ຜູ້ເຂົ້າຮ່ວມໃນການເຮັດທຸລະກໍາທາງເອເລັກໂຕຣນິກ ກໍານົດເຕັກໂນໂລຊີທີ່ແທດເໝາະ ແລະ ບັນດາຮູບແບບໃນການຈັດຕັ້ງປະຕິບັດ ສໍາລັບການເຮັດທຸລະກໍາທາງເອເລັກໂຕຣນິກຂອງເຂົາເຈົ້າ;

(ii) ບໍ່ຈໍາກັດການຮັບຮູ້ ເຕັກໂນໂລຊີໃນການຢັ້ງຢືນ ແລະ ຮູບແບບຂອງການຈັດຕັ້ງປະຕິບັດ; ແລະ

(iii) ອະນຸຍາດໃຫ້ຜູ້ເຂົ້າຮ່ວມໃນການເຮັດທຸລະກໍາທາງເອເລັກໂຕຣນິກມີໂອກາດພິສູດວ່າການເຮັດທຸລະກໍາທາງເອເລັກໂຕຣນິກຂອງພວກເຂົາແມ່ນສອດຄ່ອງກັບກົດໝາຍ ແລະ ລະບຽບຂອງສະມາຊິກ ໃນເລື່ອງທີ່ກ່ຽວຂ້ອງກັບການຢັ້ງຢືນ.

(ຄ) ເຖິງວ່າຈະມີການນໍານົດໄວ້ໃນວັກ (ຂ), ແຕ່ລະປະເທດສະມາຊິກສາມາດຮຽກຮ້ອງວ່າ, ສໍາລັບບາງປະເພດຂອງທຸລະກໍາອອນລາຍ, ການຢັ້ງຢືນແມ່ນຕ້ອງຜ່ານມາດຕະຖານສະເພາະບາງຢ່າງ ຫຼື ໃຫ້ໄດ້ຮັບການຢັ້ງຢືນຈາກອໍານາດທີ່ຖືກຮັບຮອງຕາມກົດໝາຍ ແລະ ກົດລະບຽບຂອງປະເທດສະມາຊິກ.

(ງ) ແຕ່ລະປະເທດສະມາຊິກຄວນຊຸກຍູ້ການນໍາໃຊ້ການຢັ້ງຢືນທາງເອເລັກໂຕຣນິກ ທີ່ສາມາດໃຊ້ຮ່ວມກັນໄດ້.

3. ການປົກປ້ອງຜູ້ຊົມໃຊ້ອອນລາຍ

(ກ) ບັນດາປະເທດສະມາຊິກໄດ້ຮັບຮູ້ເຖິງຄວາມສໍາຄັນຂອງການສ້າງ ແລະ ຮັກສາມາດຕະການປົກປ້ອງຜູ້ຊົມໃຊ້ທີ່ມີຄວາມໂປ່ງໃສ ແລະ ມີປະສິດທິຜົນສໍາລັບການຄ້າທາງເອເລັກໂຕຣນິກ ແລະ ມາດຕະການ ອື່ນໆທີ່ເອື້ອອໍານວຍຕໍ່ການພັດທະນາຄວາມເຊື່ອໝັ້ນຂອງຜູ້ຊົມໃຊ້.

(ຂ) ແຕ່ລະປະເທດສະມາຊິກຕ້ອງປົກປ້ອງຜູ້ຊົມໃຊ້ຜ່ານການຄ້າທາງເອເລັກໂຕຣນິກ ໃນລະດັບດຽວກັນ ກັບການປົກປ້ອງທີ່ໃຫ້ແກ່ຜູ້ຊົມໃຊ້ ຜ່ານການຄ້າໃນຮູບແບບອື່ນໆ ຕາມກົດໝາຍ, ລະບຽບການ ແລະ ນະໂຍບາຍທີ່ກ່ຽວຂ້ອງ.

ໝາຍເຫດ: ປະເທດກໍາປູເຈຍ, ສປປ ລາວ ແລະ ມຽນມາ ບໍ່ຕ້ອງຈັດຕັ້ງປະຕິບັດຕາມວັກຍ່ອຍ (ຂ) ພາຍໃນໄລຍະເວລາຫ້າປີຫຼັງຈາກວັນທີ ສັນຍາສະບັບນີ້ເລີ່ມມີຜົນບັງຄັບໃຊ້.

(ຄ) ບັນປະເທດສະມາຊິກຮັບຮູ້ເຖິງຄວາມສໍາຄັນຂອງການຮ່ວມມື ລະຫວ່າງເຈົ້າໜ້າທີ່ທີ່ຮັບຜິດຊອບວຽກງານການປົກປ້ອງຜູ້ຊົມໃຊ້ທີ່ກ່ຽວຂ້ອງກັບການຄ້າທາງເອເລັກໂຕຣນິກ ເພື່ອເສີມຂະຫຍາຍວຽກງານປົກປ້ອງຜູ້ຊົມໃຊ້.

4. ການໂອນຂໍ້ມູນຂ້າມແດນຜ່ານທາງເອເລັກໂຕຣນິກ

(ກ) ບັນດາປະເທດສະມາຊິກຮັບຮູ້ເຖິງຄວາມສໍາຄັນຂອງການອະນຸຍາດໃຫ້ຂໍ້ມູນຈໍລະຈອນຂ້າມແດນຜ່ານທາງເອເລັກໂຕຣນິກ ຊຶ່ງຂໍ້ມູນດັ່ງກ່າວຕ້ອງຖືກນໍາໃຊ້ເພື່ອຈຸດປະສົງທາງທຸລະກິດ ແລະ ຖືກຕ້ອງຕາມກົດໝາຍ ແລະ ລະບຽບທີ່ກ່ຽວຂ້ອງ.

(ຂ) ບັນດາປະເທດສະມາຊິກເຫັນດີຕໍ່ອໍານວຍຄວາມສະດວກແກ່ການຄ້າທາງເອເລັກໂຕຣນິກຂ້າມແດນໂດຍການເຮັດວຽກເພື່ອລຶບລ້າງ ຫຼື ຫຼຸດຜ່ອນສິ່ງກີດຂວາງຕໍ່ການຈໍລະຈອນຂອງຂໍ້ມູນຂ້າມແດນ, ລວມທັງຂໍ້ມູນສ່ວນຕົວ ທີ່ຕ້ອງໄດ້ມີການຮັກສາຄວາມປອດໄພທີ່ເໝາະສົມ ເພື່ອຮັບປະກັນຄວາມປອດໄພ ແລະ ຄວາມລັບຂອງຂໍ້ມູນ, ແລະ ອີງຕາມສະພາບຄວາມເປັນຈິງຂອງຈຸດປະສົງທາງນະໂຍບາຍສາທະລະນະ.

(ຄ) ວັກຍ່ອຍ (ກ) ແລະ (ຂ) ຈະບໍ່ນໍາໃຊ້ກັບການບໍລິການດ້ານການເງິນ ແລະ ຜູ້ໃຫ້ບໍລິການທາງດ້ານການເງິນຕາມທີ່ໄດ້ກໍານົດໄວ້ໃນເອກະສານຊ້ອນທ້າຍວ່າດ້ວຍການບໍລິການດ້ານການເງິນຂອງ GATS.

5. ການປົກປ້ອງຂໍ້ມູນສ່ວນບຸກຄົນທາງອອນລາຍ

(ກ) ແຕ່ລະປະເທດສະມາຊິກຕ້ອງສ້າງ ຫຼື ຮັກສາມາດຕະການ ປົກປ້ອງຂໍ້ມູນສ່ວນບຸກຄົນຂອງຜູ້ໃຊ້ການຄ້າທາງເອເລັກໂຕຣນິກ.

(ຂ) ປະເທດສະມາຊິກຈະບໍ່ມີພັນທະໃນການຈັດຕັ້ງປະຕິບັດວັກຍ່ອຍ (ກ) ກ່ອນວັນທີ່ ບັນດາປະເທດສະມາຊິກໄດ້ຮັບຮອງກົດໝາຍ ຫຼື ກົດລະບຽບເພື່ອປົກປ້ອງຂໍ້ມູນສ່ວນຕົວຂອງຜູ້ໃຊ້ການຄ້າທາງເອເລັກໂຕຣນິກ.

(ຄ) ໃນການພັດທະນາມາດຕະການປ້ອງກັນຂໍ້ມູນສ່ວນບຸກຄົນ, ແຕ່ລະປະເທດສະມາຊິກຕ້ອງໄດ້ເອົາໃຈໃສ່ຫຼັກການ, ຄໍາແນະນໍາ ແລະ ມາດຖານຂອງອົງການສາກົນທີ່ກ່ຽວຂ້ອງ.

6. ສະຖານທີ່ຕັ້ງຂອງ Computing Facilities

(ກ) ບັນດາປະເທດສະມາຊິກໄດ້ຮັບຮູ້ວ່າແຕ່ລະປະເທດສະມາຊິກ ອາດມີຂໍ້ກໍານົດດ້ານກົດໝາຍຂອງຕົນເອງກ່ຽວກັບການນໍາໃຊ້ Computing Facilities, ລວມທັງຂໍ້ກໍານົດເພື່ອຮັບປະກັນຄວາມປອດໄພ ແລະ ຄວາມລັບຂອງການສື່ສານ.

(ຂ) ບັນດາປະເທດສະມາຊິກຕົກລົງເຫັນດີບໍ່ຮຽກຮ້ອງ, ຕາມກົດໝາຍ ແລະ ລະບຽບຂອງແຕ່ລະສະມາຊິກ, ໃຫ້ນິຕິບຸກຄົນຂອງປະເທດສະມາຊິກອື່ນ ແລະ ບໍລິສັດໃນເຄືອ ກໍານົດສະຖານທີ່ໃນການຈັດວາງ Computing Facilities ຢູ່ໃນອະນາເຂດຂອງຕົນເພື່ອເປັນເງື່ອນໄຂໃນການດໍາເນີນທຸລະກິດໃນດິນແດນຂອງຕົນ.

(ຄ) ວັກ (ກ) ແລະ (ຂ) ຈະບໍ່ສາມາດນໍາໃຊ້ກັບ ການບໍລິການດ້ານການເງິນ ແລະ ຜູ້ໃຫ້ບໍລິການທາງດ້ານການເງິນຕາມທີ່ກໍານົດໄວ້ໃນເອກະສານຊ້ອນທ້າຍວ່າດ້ວຍການບໍລິການດ້ານການເງິນຂອງ GATS.

## ມາດຕາ 8
## ຄວາມປອດໄພທາງອິນເຕີເນັດ

ບັນດາປະເທດສະມາຊິກຮັບຮູ້ເຖິງຄວາມສໍາຄັນຂອງ:

(ກ) ຄວາມອາດສາມາດໃນການສ້າງໜ່ວຍງານແຫ່ງຊາດຂອງຕົນ ທີ່ຮັບຜິດຊອບຕໍ່ຄວາມປອດໄພ ທາງອິນເຕີເນັດ ລວມທັງການແລກປ່ຽນປະສົບການໃນການປະຕິບັດຕົວຈິງ; ແລະ

(ຂ) ການນຳໃຊ້ກົນໄກການຮ່ວມມືທີ່ມີຢູ່ ເພື່ອຮ່ວມມືກັນໃນການຮັບມືກັບບັນຫາຕ່າງໆທີ່ກ່ຽວຂ້ອງກັບຄວາມປອດໄພທາງອິນເຕີເນັດ.

**ມາດຕາ 9**
**ການຊຳລະທາງເອເລັກໂຕຣນິກ**

1. ປະເທດສະມາຊິກໄດ້ຮັບຮູ້ເຖິງຄວາມສຳຄັນຂອງລະບົບການລະບົບຊຳລະເອເລັກໂຕຣນິກທີ່ມີຄວາມປອດໄພ ແລະ ຄວາມໝັ້ນຄົງ, ມີປະສິດທິພາບ ແລະ ສາມາດປະຕິບັດງານຮ່ວມກັນໄດ້ ພ້ອມກັບພິຈາລະນາຄວາມພ້ອມຂອງແຕ່ລະປະເທດສະມາຊິກ ກ່ຽວກັບຄວາມອາດສາມາດ, ພື້ນຖານໂຄງລ່າງ ແລະ ລະບຽບການ ກ່ຽວກັບລະບົບການຊຳລະທາງເອເລັກໂຕຣນິກ.

2. ແຕ່ລະປະເທດສະມາຊິກ ຄວນຊຸກຍູ້ການນຳໃຊ້ລະບົບການຊຳລະທາງເອເລັກໂຕຣນິກ ທີ່ມີຄວາມປອດໄພ ແລະ ຄວາມໝັ້ນຄົງ, ມີປະສິດທິພາບ ແລະ ສາມາດປະຕິບັດງານຮ່ວມກັນໄດ້ ເພື່ອອຳນວຍຄວາມສະດວກແກ່ການຄ້າທາງເອເລັກໂຕຣນິກ ຕາມກົດໝາຍ ແລະ ລະບຽບການຕ່າງໆ.

**ມາດຕາ 10**
**ການຂົນສົ່ງ**

1. ປະເທດສະມາຊິກໄດ້ຮັບຮູ້ເຖິງຄວາມສຳຄັນຂອງການຂົນສົ່ງຂ້າມຊາຍແດນທີ່ມີປະສິດຕິພາບ.

2. ແຕ່ລະປະເທດສະມາຊິກຕ້ອງພະຍາຍາມຫຼຸດຄ່າໃຊ້ຈ່າຍ ແລະ ປັບປຸງຄວາມໄວ ແລະ ຄວາມເຊື່ອໝັ້ນຂອງຕ່ອງໂຊ້ສາຍການຜະລິດ (Supply Chains).

**ມາດຕາ 11**
**ການມີສ່ວນຮ່ວມຂອງພາກສ່ວນກ່ຽວຂ້ອງ**

ແຕ່ລະປະເທດສະມາຊິກຕ້ອງໄດ້ປະຕິບັດເປັນປົກກະຕິກັບຜູ້ທີ່ກ່ຽວຂ້ອງ, ລວມທັງພາກສ່ວນເອກະຊົນ, ສະຖາບັນການສຶກສາ, ອົງການຈັດຕັ້ງສາກົນ ແລະ ຄູ່ຮ່ວມງານອື່ນໆ, ເພື່ອສົ່ງເສີມການແລກປ່ຽນຂໍ້ມູນຂ່າວສານ ແລະ ສ້າງຄຳຄິດຄຳເຫັນ, ຄຳແນະນຳ ຫຼື ຂໍ້ສະເໜີກ່ຽວກັບການພັດທະນາດ້ານການຄ້າທາງເອເລັກໂຕຣນິກ.

**ມາດຕາ 12**
**ລະບຽບການພາຍໃນປະເທດ**

ແຕ່ລະປະເທດສະມາຊິກຕ້ອງຮັກສາ ຫຼື ສ້າງ ກົດໝາຍ ແລະ ກົດລະບຽບ ເພື່ອຄຸ້ມຄອງການດຳເນີນທຸລະກຳດ້ານການຄ້າທາງເອເລັກໂຕຣນິກ ໃນທັນທີທີ່ເປັນໄປໄດ ໂດຍໃຫ້ສອດຄ່ອງກັບບັນດາສົນທິສັນຍາສາກົນ ຫຼື ກົດໝາຍທີ່ກ່ຽວຂ້ອງກັບການຄ້າທາງເອເລັກໂຕຣນິກ.

## ມາດຕາ 13
## ຄວາມໂປ່ງໃສ

1. ແຕ່ລະປະເທດສະມາຊິກຕ້ອງເຜີຍແຜ່ຢ່າງທັນທີ ຫຼື ບ່ອນໃດທີ່ບໍ່ສາມາດດຳເນີນການໄດ້ ສາມາດເຜີຍແຜ່ແຕ່ມາດຕະການທີ່ກ່ຽວກັບການນຳໃຊ້ທົ່ວໄປ ແລະ ການປະຕິບັດງານໃດໆ ຂອງສັນຍາສະບັບນີ້. ຮູບແບບຂອງການພິມຄວນປະກອບມີການເຜີຍແຜ່ຜ່ານທາງອອນລາຍໃນກໍລະນີທີ່ເປັນໄປໄດ້.
2. ແຕ່ລະປະເທດສະມາຊິກຕ້ອງພິຈາລະນາຂໍ້ສະເໜີຂອງ ຂອງປະເທດສະມາຊິກອື່ນຢ່າງທັນການ ກ່ຽວກັບຂໍ້ມູນທີ່ພົວພັນເຖິງມາດຕະການປະຕິບັດທົ່ວໄປທີ່ກ່ຽວຂ້ອງກັບ ຫຼື ສິ່ງຜົນກະທົບຕໍ່ການດຳເນີນການຂອງສັນຍາສະບັບນີ້.

## ມາດຕາ 14
## ຂໍ້ຍົກເວັ້ນ

ມາດຕາ XIV ແລະ XIV bis ຂອງ GATS ແມ່ນໄດ້ລວມເຂົ້າໃນ ແລະ ເຮັດເປັນສ່ວນໜຶ່ງຂອງສັນຍາສະບັບ ນີ້, ສາມາດເລືອກໃຊ້ແບບອານຸໂລມ (Mutatis mutandis).

## ມາດຕາ 15
## ການແກ້ໄຂຂໍ້ຂັດແຍ່ງ

1. *ສົນທິສັນຍາອາຊຽນວ່າດ້ວຍ ກົນໄກການແກ້ໄຂຂໍ້ຂັດແຍ່ງ* ທີ່ໄດ້ລົງນາມໃນວັນທີ 29 ເດືອນພະຈິກປີ 2004 ທີ່ນະຄອນຫຼວງວຽງຈັນ, ສປປ ລາວ ຫຼື ສົນທິສັນຍາປ່ຽນແທນ ຈະຖືກນຳໃຊ້ເຂົ້າໃນການແກ້ໄຂຂໍ້ຂັດແຍ່ງກ່ຽວກັບການຕີຄວາມໝາຍ ຫຼື ການຈັດຕັ້ງປະຕິບັດສັນຍາສະບັບນີ້.
2. ວັກທີ 1 ຈະບໍ່ຖືກໃຊ້ກັບມາດຕາ 6 (ການຮ່ວມມື).

## ມາດຕາ 16
## ການຈັດຕັ້ງປະຕິບັດ

1. ກອງປະຊຸມເຈົ້າຫນ້າທີ່ອາວຸໂສເສດຖະກິດອາຊຽນ (SEOM) ຕ້ອງຕິດຕາມການຈັດຕັ້ງປະຕິບັດສັນຍາສະບັບນີ້. SEOM ຕ້ອງມອບໝາຍໃຫ້ຄະນະກຳມະການປະສານງານອາຊຽນວ່າດ້ວຍການຄ້າທາງເອເລັກໂຕຣນິກ (ACCEC) ປະສານງານ, ຕິດຕາມກວດກາ ແລະ ທົບທວນການຈັດຕັ້ງປະຕິບັດສັນຍາສະບັບນີ້ ໂດຍຮ່ວມມືກັບອົງການຈັດຕັ້ງພາກພື້ນອາຊຽນອື່ນໆ ໂດຍມີການການສະໜັບສະໜູນຈາກກອງເລຂາອາຊຽນ.

2. SEOM ຕ້ອງປະຕິບັດລາຍງານຢ່າງເປັນປົກກະຕິໃຫ້ກອງປະຊຸມລັດຖະມົນຕີເສດຖະກິດອາຊຽນກ່ຽວກັບສະຖານະພາບການຈັດຕັ້ງປະຕິບັດສັນຍາສະບັບນີ້ ໂດຍອີງໃສ່ບົດລາຍງານສະຖານະພາບໂດຍ ACCEC.

## ມາດຕາ 17
## ການທົບທວນຄືນ

1. ສະມາຊິກຕ້ອງມີການທົບທວນ[2]ສັນຍາສະບັບນີ້ຮ່ວມກັນ ບໍ່ເກີນສາມປີນັບແຕ່ວັນທີມີຜົນບັງຄັບໃຊ້ຂອງສັນຍາສະບັບນີ້ ແລະ ທຸກໆສາມປີຕໍ່ມາ. ເວັ້ນເສຍແຕ່ວ່າບັນດາປະເທດສະມາຊິກໄດ້ເຫັນດີເອກະພາບຕໍ່ກັນ. ການທົບທວນດັ່ງກ່າວ ຕ້ອງເປັນການພິຈາລະນາເອົາການພິຈາລະນາເອົາຂໍ້ຜູກພັນເພີ່ມເຕີມພາຍໃຕ້ສັນຍາສະບັບນີ້.

## ມາດຕາ 18
## ການປັບປຸງ

ຂໍ້ກຳນົດຂອງສັນຍາສະບັບນີ້ອາດຈະຖືກດັດແກ້ໂດຍການຕົກລົງເປັນລາຍລັກອັກສອນຮ່ວມກັນຂອງປະເທດສະມາຊິກ.

## ມາດຕາ 19
## ຜົນບັງຄັບໃຊ້

1. ຂໍ້ຕົກລົງນີ້ຈະມີຜົນບັງຄັບໃຊ້ຫຼັງຈາກເອກະສານການໃຫ້ສັດຕະຍາບັນ, ການອະນຸມັດ ຫຼື ການຮັບຮອງຂອງປະເທດສະມາຊິກໄດ້ຖືກມອບໃຫ້ເລຂາທິການໃຫຍ່ອາຊຽນ.
2. ເລຂາທິການໃຫຍ່ອາຊຽນຕ້ອງແຈ້ງຜົນບັງຄັບໃຊ້ໃຫ້ປະເທດສະມາຊິກດັ່ງທີ່ໄດ້ລະບຸໄວ້ໃນວັກ 1.
3. ຂໍ້ຕົກລົງຕ້ອງເກັບໄວ້ກັບກອງເລຂາທິການອາຊຽນ, ຜູ້ທີ່ຕ້ອງມອບໃຫ້ສຳເນົາທີ່ໄດ້ຮັບການຢັ້ງຢືນນັ້ນໃຫ້ແກ່ສະມາຊິກແຕ່ລະປະເທດ.

ໂດຍການເປັນພະຍານຂອງຜູ້ລົງລາຍເຊັນ, ຖືກຮັບຮອງໂດຍອີງການລັດຖະບານທີ່ກ່ຽວຂ້ອງຂອງຕົນ, ເຊິ່ງໄດ້ລົງນາມໃນສັນຍາສະບັບນີ້.

ລົງນາມທີ່ ___________, ວັນທີ, ເດືອນ, ປີ ___________, ໃນເອກະສານຕົ້ນສະບັບດຽວໃນພາສາອັງກິດ.

[2] ການທົບທວນນີ້ຕ້ອງປະກອບມີ, ແຕ່ບໍ່ຈຳກັດ, ມາດຕາ 4 ແລະ 6 ຂອງມາດຕາ 7 (ການອຳນວຍສະດວກດ້ານການຄ້າທາງເອເລັກໂຕຣນິກຂ້າມຊາຍແດນ), ຕາມການຕົກລົງກັນໂດຍປະເທດສະມາຊິກ.

ສໍາລັບ ບູໄນດາຣູຊາລາມ:

(ຂຽນຊື່ເປັນຕົວພິມໃຫຍ່ ແລະ ໃນວົງເລັບ)

(ການແຕ່ງຕັ້ງ)

ສໍາລັບ ຣາດຊະອານາ ຈັກກໍາປູເຈຍ:

(ຂຽນຊື່ເປັນຕົວພິມໃຫຍ່ ແລະ ໃນວົງເລັບ)

(ການແຕ່ງຕັ້ງ)

ສໍາລັບ ສາທາລະນະລັດ ອິນໂດເນເຊຍ:

(ຂຽນຊື່ເປັນຕົວພິມໃຫຍ່ ແລະ ໃນວົງເລັບ)

(ການແຕ່ງຕັ້ງ)

ສໍາລັບ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ:

(ຂຽນຊື່ເປັນຕົວພິມໃຫຍ່ ແລະ ໃນວົງເລັບ)
(ການແຕ່ງຕັ້ງ)

ສໍາລັບ ມາເລເຊຍ:

(ຂຽນຊື່ເປັນຕົວພິມໃຫຍ່ ແລະ ໃນວົງເລັບ)
(ການແຕ່ງຕັ້ງ)

ສໍາລັບ ສະຫະພັນ ສາທາລະນະລັດ ມຽນມາ:

(ຂຽນຊື່ເປັນຕົວພິມໃຫຍ່ ແລະ ໃນວົງເລັບ)
(ການແຕ່ງຕັ້ງ)

ສໍາລັບ ສາທາລະນະລັດ ຟີລິບປິນ:

(ຂຽນຊື່ເປັນຕົວພິມໃຫຍ່ ແລະ ໃນວົງເລັບ)
(ການແຕ່ງຕັ້ງ)

ສໍາລັບ ສາທາລະນະລັດ ສິງກະໂປ:

(ຂຽນຊື່ເປັນຕົວພິມໃຫຍ່ ແລະ ໃນວົງເລັບ)

(ການແຕ່ງຕັ້ງ)

ສຳລັບ ຣາດຊະອານາຈັກ ໄທ:

(ຂຽນຊື່ເປັນຕົວພິມໃຫຍ່ ແລະ ໃນວົງເລັບ)

(ການແຕ່ງຕັ້ງ)

ສຳລັບ ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ:

(ຂຽນຊື່ເປັນຕົວພິມໃຫຍ່ ແລະ ໃນວົງເລັບ)

(ການແຕ່ງຕັ້ງ)